

# ບົດທີ 6
# ການສື່ສານ

**ການສື່ສານແມ່ນເກີດຂຶ້ນໄດ້ໃນເມື່ອ:**

- ບຸກຄົນໜຶ່ງເປັນຜູ້ສົ່ງຂໍ້ມູນ ແລະ.
- ອີກບຸກຄົນໜຶ່ງເປັນຜູ້ຮັບຂໍ້ມູນ ແລະ ຕອບຄືນ.

ແອນ້ອຍຈະເລີ່ມມີການສື່ສານຕັ້ງແຕ່ຕອນເກີດ ຈົນເຖິງມື້ຮຽນປາກ. ກ່ອນທີ່ເດັກນ້ອຍຈະມີການສື່ສານກັບຄົນທົ່ວໄປ, ລາວຕ້ອງໄດ້ຮຽນຮູ້ທັກສະການສື່ສານງ່າຍໆ ຈາກຄົນທົ່ວໄປຄື:




**① ຄວາມເຂົ້າໃຈກ່ຽວກັບຄຳສັບ ແລະ ການຂໍຮ້ອງທີ່ງ່າຍໆ.**



**② ການໃຊ້ມືເພື່ອສະແດງທ່າທາງບອກ**




**③ ການເວົ້າຄຳສັບງ່າຍໆ.**




**④ ການໃຊ້ປະໂຫຍກສັ້ນໆ.**

ທັກສະການສື່ສານທັງໝົດເຫຼົ່ານີ້ຈະຊ່ວຍໃຫ້ລູກນ້ອຍຂອງທ່ານຮູ້ສຶກວ່າມີຄວາມໃກ້ຊິດກັບຄອບຄົວຂອງລາວ, ອີກບໍ່ດົນທັກສະຕ່າງໆເຫຼົ່ານີ້ ຈະຊ່ວຍໃຫ້ລາວຮຽນຮູ້ການຫຼິ້ນກັບເດັກນ້ອຍຄົນອື່ນໆ.

**ການສື່ສານທີ່ມີຜົນກະທົບຕໍ່ບັນຫາການເບິ່ງເຫັນຂອງເດັກ.**

ແອນ້ອຍອ່ອນໆສາມາດສົ່ງຂໍ້ຄວາມກ່ຽວກັບສິ່ງທີ່ລາວຄິດ ຫຼື ຮູ້ສຶກຈາກການຫຍັບຍ້າຍຮ່າງກາຍ (ການຫຍັບຍ້າຍໄປມາຂອງຫົວ), ຈາກສຽງທີ່ລາວເຮັດຂຶ້ນເອງ (ສຽງຮ້ອງໄຫ້) ແລະ ການປ່ຽນໜ້າແຕ່ລະຄົນທີ່ມາເບິ່ງໜ້າຂອງເດັກ (ການຍິກຄິ້ວ ຍິກຄາງ). ສະມາຊິກພາຍໃນຄອບຄົວຈະຮຽນຮູ້ເຂົ້າໃຈເຖິງຄວາມໝາຍສິ່ງທີ່ເປັນຂໍ້ຄວາມຕ່າງໆຂອງແອນ້ອຍ ແລະ ການຕອບໂຕ້ຄືນຂໍ້ຄວາມເຫຼົ່ານັ້ນ.







ແອນ້ອຍທຸກຄົນມັກຫຼິ້ນ ແຕ່ແອນ້ອຍຜູ້ນີ້ຕ້ອງການຄວາມຊ່ວຍເຫຼືອເພື່ອການເລີ່ມຕົ້ນ.

ແອນ້ອຍທີ່ເບິ່ງເຫັນບໍ່ໄດ້ດີ ຂ້ອນຂ້າງມິດງຽບຫຼາຍ, ລາວຈະສົ່ງອອກມາພຽງແຕ່ 2-3 ຂໍ້ຄວາມເທົ່ານັ້ນ. ນັ້ນເປັນເພາະວ່າ ລາວອາດຈະທຳຄວາມເຂົ້າໃຈ ສຽງຕ່າງໆທີ່ເກີດຂຶ້ນອ້ອມຂ້າງຂອງລາວ. ຄອບຄົວສາມາດຊ່ວຍໃນເລື່ອງການສື່ສານໃຫ້ແກ່ເດັກ ໂດຍການສົ່ງຂໍ້ຄວາມ ຫຼື ຄຳເວົ້າໃນທາງໃດກໍ່ຕາມ ທີ່ລາວສາມາດເຂົ້າໃຈ ແລະ ຮຽນຮູ້ເຖິງຂໍ້ຄວາມອັນແຕກຕ່າງທີ່ເດັກສົ່ງອອກມາ.

ຜູ້ເປັນພໍ່ແມ່ຕ້ອງຮຽນຮູ້ການສັງເກດຊະນິດຂອງຂໍ້ຄວາມອັນແຕກຕ່າງ ທີ່ແອນ້ອຍໄດ້ສົ່ງອອກມາ. ເດັກນ້ອຍທີ່ເບິ່ງເຫັນຈະໃຊ້ສາຍຕາເພື່ອສະແດງເຖິງການສື່ສານໃນຄວາມເອົາໃຈໃສ່ຕໍ່ການຫຼິ້ນຕ່າງໆ. ແຕ່ວ່າແອນ້ອຍທີ່ຕາບອດ ອາດຈະໃຊ້ການເຄື່ອນໄຫວຂອງມືແລະ ຮ່າງກາຍ ເພື່ອສົ່ງຂໍ້ຄວາມທີ່ມີຄວາມໝາຍຄ້າຍຄືກັນອອກມາ ຫຼື ລາວອາດຈະມິດງຽບ, ດັ່ງນັ້ນ ລາວສາມາດເອົາໃຈໃສ່ເຖິງສິ່ງຕ່າງໆ ທີ່ເກີດຂຶ້ນອ້ອມຕົວລາວ.

ພໍ່ແມ່ຕ້ອງສົ່ງຂໍ້ຄວາມແຕກຕ່າງນັ້ນຕອບຄືນແອນ້ອຍ, ເຊິ່ງມັນຈະເປັນເລື່ອງງ່າຍ ທີ່ຈະໃຫ້ທ່ານລືມໄປວ່າ ລູກນ້ອຍຂອງທ່ານບໍ່ສາມາດເບິ່ງເຫັນພໍ່ແມ່ ຫຼື ຍິ້ມຫົວ ແລະ ພວກເຂົາຕ້ອງສົ່ງຂໍ້ຄວາມຕ່າງໆໃຫ້ແກ່ລາວໂດຍຜ່ານການຈັບ ຫຼື ການສົ່ງສຽງ.




ຖ້າຈົກກະດີກລູກຂອງລາວ ລູກອາດຈະຫົວຕອບກັບຄືນ.

## ການເວົ້ານຳລູກນ້ອຍຂອງທ່ານແມ່ນສຳຄັນທີ່ສຸດ.

ເດັກນ້ອຍທີ່ເບິ່ງບໍ່ເຫັນດີ ຈະໃຊ້ເວລາຂ້ອນຂ້າງ ໜັກກວ່າການເວົ້າກັບເດັກ ນ້ອຍທົ່ວໄປໃນການຮຽນຮູ້ ຄວາມໝາຍຂອງຄຳສັບຕ່າງໆ, ນີ້ກໍ່ຍ້ອນວ່າ ລາວບໍ່ສາມາດເບິ່ງເຫັນ ໃນສິ່ງທີ່ທ່ານກຳລັງເວົ້າອອກມາ ແລະ ອີກສິ່ງໜຶ່ງ ກໍ່ແມ່ນການຟັງຄົນອື່ນ ແລະ ເວົ້າກັບຄົນອື່ນແມ່ນເປັນສິ່ງທີ່ສຳຄັນຢ່າງ ເປັນພິເສດຕໍ່ກັບ ເດັກຕາບອດ, ເພາະ ວ່າທັກສະເຫຼົ່ານີ້ ຈະຊ່ວຍໃຫ້ລາວເຂົ້າໃຈ ເຖິງໂລກທີ່ເບິ່ງບໍ່ເຫັນ.




ເຊັ່ນດຽວກັນກັບທ່ານເຮັດວຽກງານປະຈຳວັນ ຫຼື ຫຼິ້ນນຳລູກນ້ອຍຂອງທ່ານ, ເວົ້າຄຳ ແລະ ປະ ໂຫຍກ ສັ້ນໆກັບລາວ. ທຳອິດມັນຈະຍາກຫຼາຍ ຖ້າເຮົາບໍ່ ນຳໃຊ້ການເວົ້າໃຫ້ຫຼາຍໆ. ແຕ່ຈື່ໄວ້ວ່າ, ເປັນທາງ ດຽວທີ່ຈະຊ່ວຍໃຫ້ລູກນ້ອຍຂອງທ່ານສາມາດຮຽນ ຮູ້ກ່ຽວກັບໂລກ, ໂດຍສະເພາະສິ່ງເຫຼົ່ານັ້ນຈະບໍ່ເປັນ ປະສົບການໃຫ້ແກ່ຕົວລາວເອງ. ຈົ່ງຢ່າຊ້າ, ສິ່ງນີ້ຈະ ຊ່ວຍໃຫ້ລາວສາມາດເວົ້າກັບຄົນອື່ນໆໄດ້.







ຈົ່ງຈື່ໄວ້ວ່າເດັກທີ່ບໍ່ສາມາດເບິ່ງ ເຫັນແມ່ນຕ້ອງຮຽນຮູ້ຈາກຫຼາຍສິ່ງ ຫຼາຍຢ່າງກ່ຽວກັບໂລກ. ໂດຍການເຂົ້າ ຮ່ວມໃນການເຮັດກິດຈະກຳຕ່າງໆ. ເດັກ ນ້ອຍທີ່ເບິ່ງບໍ່ເຫັນດີ ແມ່ນຈະໃຊ້ປະສາດ ຮັບຮູ້ອື່ນໆເພື່ອຮຽນຮູ້ກ່ຽວກັບໂລກ. ເມື່ອ ໃດກໍ່ຕາມ ຖ້າເປັນໄປໄດ້ໃຫ້ຊວນລາວ ຈັບ, ສຳຜັດລົດຊາດ ຫຼື ດົມກິ່ນຕ່າງໆ ທີ່ ທ່ານກຳລັງເວົ້າເຖິງ. ສິ່ງນີ້ຈະຊ່ວຍໃຫ້ລາວ ເລີ່ມທຳຄວາມເຂົ້າໃຈວ່າຄຳສັບຕ່າງໆເຫຼົ່າ ນັ້ນມັນໝາຍຄວາມວ່າແນວໃດແດ່.

# ກິດຈະກຳ

ກິດຈະກຳຕ່າງໆລຸ່ມນີ້ ແມ່ນໄດ້ແຍກອອກເປັນ 2 ໝວດ ຄື:

- ກິດຈະກຳທີ່ນຳໃຊ້ກັບເດັກທີ່ຍັງເວົ້າບໍ່ເປັນ ແລະ
- ກິດຈະກຳສ່ວນໃຫຍ່ແມ່ນນຳໃຊ້ກັບເດັກທີ່ກຳລັງເລີ່ມຮຽນເວົ້າ.

ຖ້າລູກນ້ອຍຂອງທ່ານສາມາດເບິ່ງເຫັນໄດ້ໜ້ອຍໜຶ່ງ ທ່ານຕ້ອງປັບກິດຈະກຳເຫຼົ່ານີ້ນຳໃຊ້ກັບເຂົາ ເຊິ່ງມັນຈະເປັນການດີທີ່ສຸດ ເພື່ອເປັນຜົນສະທ້ອນດີໃຫ້ແກ່ການເບິ່ງເຫັນທີ່ຍັງເຫຼືອຂອງລາວ (ເບິ່ງບົດທີ 4).

## ການສື່ສານກ່ອນທີ່ລູກນ້ອຍຂອງທ່ານເວົ້າເປັນ.

**ການເວົ້າຕອບຄືນ:**

ການເວົ້າຕອບກັບຄືນລູກນ້ອຍຂອງທ່ານໝາຍເຖິງ: (1) ການສົ່ງຂໍ້ຄວາມໃຫ້ແກ່ລາວ ຫຼື ການຕອບກັບຄືນຂໍ້ຄວາມທີ່ລາວໄດ້ສົ່ງອອກມາ ແລະ (2) ການຍອມຮັບທຸກໆ ຂໍ້ຄວາມຂອງລູກ ແລະ ການຈັບ ຫຼື ໃຫ້ຄວາມໃກ້ຊິດແກ່ລາວໃນລະຫວ່າງກຳລັງຫຼິ້ນຢູ່ກັບລາວ.

ທຸກຄັ້ງທີ່ທ່ານເວົ້າຕອບກັບຄືນລູກນ້ອຍຂອງທ່ານ ອາດຈະປາກົດມີບາງຢ່າງເກີດຂຶ້ນ ແຕ່ວ່ານີ້ ແມ່ນການແນະນຳທົ່ວໄປ ທີ່ອາດຈະຊ່ວຍໃຫ້ເດັກມີການຕອບຮັບທີ່ດີຂຶ້ນ:

1. ໄລຍະທຳອິດ, ເຮັດໃຫ້ລູກນ້ອຍຂອງທ່ານຮູ້ວ່າ ທ່ານຢູ່ໃກ້ໆ ແລະ ພ້ອມທີ່ຈະຫຼິ້ນກັບເຂົາຢູ່ສະເໝີ.

2. ທຳອິດ ເຮັດໃຫ້ລູກນ້ອຍຂອງທ່ານຕອບຮັບຄືນ ເພື່ອວ່າລາວອາດຈະຢາກໃຫ້ເຮົາຮູ້ ບາງສິ່ງບາງຢ່າງທີ່ສະແດງໃຫ້ເຫັນວ່າລາວຕ້ອງການຢາກຈະເຮັດຫຍັງ, ແຕ່ວ່າຖ້າ ທ່ານຕ້ອງລໍຖ້າເປັນເວລາດົນ ເພື່ອໃຫ້ລາວສົ່ງຂໍ້ຄວາມອອກມາໃຫ້ທ່ານ ສົ່ງຂໍ້ຄວາມໄປຫາລາວ ແລະ ມັນເປັນການເລີ່ມຕົ້ນຈາກຕົວທ່ານເອງ.

3. ເມື່ອລູກນ້ອຍຂອງທ່ານຕອບຮັບໄປ ໃນທາງອື່ນ ໃຫ້ທ່ານພິຈາລະນາສິ່ງທີ່ລາວຕອບອອກມານັ້ນ ແລະ ທ່ານກໍ່ຕ້ອງຕອບຄືນມັນອອກໄປ. ສິ່ງນີ້ມັນຈະເຮັດໃຫ້ລາວຮູ້ວ່າ ທ່ານໄດ້ກຳລັງສັງເກດເບິ່ງການກະທຳຂອງລາວຢູ່ ແລະ ທ່ານກໍ່ກຳລັງມັກມັນ. ຖ້າລາວບໍ່ຕອບຮັບຫຍັງເລີຍ ໃຫ້ທ່ານຊ່ວຍໃນການ "ເຮັດທ່າທາງປະກອບ" ເຊັ່ນ: ການຈັບແຂນຂອງລາວ ເພື່ອເຮັດໃຫ້ລາວຮູ້ວ່າ ລາວໄດ້ ຕອບຄືນແລ້ວ ແລະ ມັນກໍ່ອາດຈະຊ່ວຍໃຫ້ໄດ້ນຳໃຊ້ກິດຈະກຳທີ່ພົວພັນເຖິງການໃຫ້ ແລະ ການຮັບເອົາ ເຊັ່ນ: ການກິ້ງໝາກບານກັບຄືນ ແລະ ໃຫ້ກິ້ງກັບຄືນຢູ່ລະຫວ່າງທ່ານກັບລູກ.




4. ເມື່ອທ່ານຕອບຄືນຂໍ້ຄວາມຕ່າງໆຂອງເດັກ ກະລຸນາເຮັດຕອບຄືນຕາມຈຳນວນຄັ້ງທີ່ລາວໄດ້ເຮັດ.

5. ອານຸຍາດໃຫ້ລູກນ້ອຍຂອງທ່ານຢຸດເຮັດກິດຈະກຳໄດ້ທຸກເວລາຖ້າລາວຕ້ອງການ. ເກມກ່ຽວກັບການຕອບຄືນ ສ່ວນຫຼາຍໃຊ້ເວລາພຽງແຕ່ 1 ນາທີ ຫຼື 2 ນາທີເທົ່ານັ້ນ ເພາະວ່າ ເດັກນ້ອຍຈະເອົາໃຈໃສ່ໃນການຫຼິ້ນກັບທ່ານພຽງແຕ່ໃນເວລາສັ້ນໆເທົ່ານັ້ນ.

## ກະຕຸ້ນລູກນ້ອຍຂອງທ່ານໃຫ້ເຮັດຄືນ.

ການຕອບຄືນແມ່ນຊ່ວຍໃຫ້ລູກນ້ອຍຂອງທ່ານຮຽນຮູ້ວ່າ ລາວສາມາດ ຕອບໂຕ້ຄືນສິ່ງທີ່ຄົນອື່ນໄດ້ເຮັດໂດຍການສົ່ງຂໍ້ຄວາມກັບຄືນໄປຫາພວກເຂົາ. ສິ່ງນີ້ ຈະຊ່ວຍໃຫ້ລາວມີຄວາມສົນໃຈ ກັບໂລກເພີ່ມຂຶ້ນ ແລະ ມີຄວາມກະຕືລືລົ້ນໃນການສື່ສານກັບຄົນອື່ນເພີ່ມຂຶ້ນ. ການຕອບໂຕ້ຄືນ ຂອງເດັກຍັງຊ່ວຍໃຫ້ລາວໄດ້ຮຽນຮູ້ທັກສະທີ່ສຳຄັນຂອງການສື່ສານວ່າ ຈະເລີ່ມຕົ້ນສື່ສານໄດ້ແນວໃດ, ຈະເອົາໃຈໃສ່ໃນການຫຼິ້ນໄດ້ແນວໃດ ແລະ ຕອບໂຕ້ຄືນຂໍ້ຄວາມຂອງຄອບຄົວໄດ້ແນວໃດ.




1. ປ້າມາເຣຍ ເຮັດ ໃຫ້ຫຼານຂອງລາວຮູ້ວ່າ ລາວຢູ່ໃກ້ ແລະ ພ້ອມທີ່ຈະຫຼິ້ນນຳ ເຣນ ໂດຍການເວົ້າຄຳເວົ້າທີ່ອ່ອນຫວານກັບຫຼານນ້ອຍ ແລະ ພ້ອມທັງຈັບແຂນຂອງຫຼານ.




2. ເມື່ອ ເຣນ ຕອບໂຕ້ລາວຄືນ ໂດຍການຈັບ ແລະ ການສຳຫຼວດເທິງໃບໜ້າຂອງລາວ, ລາວກໍ່ບອກໃຫ້ຫຼານນ້ອຍຮູ້ອີກວ່າ ການເຮັດແບບນີ້ແມ່ນເປັນສິ່ງສຳຄັນທີ່ສຸດ.




3. ປ້າມາເຣຍ ລໍຖ້າໃຫ້ ເຣນ ເຮັດແລ້ວໆ ແລະ ຕໍ່ໄປລາວກໍ່ເຮັດຕອບໂຕ້ຄືນ ດ້ວຍການໃຊ້ນິ້ວມືຈັບດັງຂອງຫຼານນ້ອຍ.



4. ຫຼັງຈາກນັ້ນ ລາວກໍ່ລໍຖ້າໃຫ້ເດັກນ້ອຍ ຕອບໂຕ້ຄືນ ແລະ ກໍ່ດຳເນີນຕໍ່ໄປແບບນີ້ຢູ່ເລື້ອຍໆ.

**ການກະກຽມທີ່ຈະເວົ້າ.**

**ຊ່ວຍລູກຂອງທ່ານສົ່ງຂໍ້ຄວາມຕ່າງໆຈາກການໃຊ້ອະໄວຍະວະຂອງຮ່າງກາຍ (ການສະແດງທ່າທາງ).**

ທົດສອບການຫຼິ້ນເກມທີ່ນຳໃຊ້ການສະແດງທ່າທີ




ເດັກນ້ອຍຜູ້ນີ້ກຳລັງຮຽນຮູ້ການຊີ້ເພື່ອແທນຂໍ້ຄວາມທີ່ສົ່ງອອກໄປ.

ອະທິບາຍການສະແດງທ່າທີທີ່ແຕກຕ່າງໃຫ້ລາວຮູ້.




**ກະກຽມໃຫ້ລູກນ້ອຍຂອງທ່ານຮຽນເວົ້າ.**

ເວົ້າກ່ຽວກັບບາງວຽກງານ ແລະ ກິດຈະກຳທີ່ທ່ານກຳລັງເຮັດຢູ່ ແລະ ບອກລາວວ່າ ທ່ານເຮັດມັນແນວໃດ.



ຕົວຢ່າງຂ້າງລຸ່ມນີ້ແມ່ນຕົວຢ່າງອື່ນໆທີ່ທ່ານຄວນເອົາໄປນຳໃຊ້:




ອ້າຍຂອງທ້າວ ໂຕບາ ກຳລັງໃຊ້ກຸ່ມຄຳສັບເພື່ອອະທິບາຍ ເກມ ທີ່ທ້າວ ໂຕບາ ມັກຫຼິ້ນ.

ເວົ້າຄຳສັບກ່ຽວກັບສິ່ງທີ່ທ່ານມັກເຮັດໃຫ້ລູກຟັງເປັນປະຈຳ.




ຖ້າທ່ານໝັ່ນເວົ້າຄຳສັບກ່ຽວກັບພາກສ່ວນຕ່າງໆ ຂອງຮ່າງກາຍ ແລະ ກ່ຽວກັບວັດຖຸທຳມະດາທີ່ທ່ານໃຊ້ ເຂົ້າກິດຈະກຳໃນແຕ່ລະມື້. ລູກນ້ອຍຂອງທ່ານຈະຮຽນຮູ້ຄວາມໝາຍຂອງຄຳສັບກ່ອນທີ່ລາວຈະສາມາດເວົ້າໄດ້.

ເດັກນ້ອຍທີ່ມີບັນຫາໜັກໃນການເບິ່ງເຫັນນັ້ນ ລາວບໍ່ສາມາດເຫັນຄວາມຮູ້ສຶກທີ່ຄົນທົ່ວໆໄປສະແດງ ໃຫ້ເຫັນ ເຊັ່ນ: ຄວາມຢ້ານກົວ ຫຼື ຄວາມສະໜຸກສະໜານ. ລາວຕ້ອງການໃຫ້ທ່ານທຳຄວາມເຂົ້າໃຈວ່າ ຄວາມຮູ້ສຶກນັ້ນມັນແມ່ນຫຍັງ. ກະຕຸ້ນໃຫ້ລາວມີຄວາມຮູ້ສຶກຄຸ້ນເຄີຍກັບໃບໜ້າຂອງທ່ານ ແລະ ຮຽນຮູ້ຄວາມຮູ້ສຶກຕ່າງໆ ຢູ່ບົນໃບໜ້າຂອງຕົວລາວເອງ.




ເວົ້າກັບລາວ ກ່ຽວກັບຄວາມຮູ້ສຶກ ແລະ ອາລົມ ເພື່ອຈະເປັນປະສົບການໃຫ້ແກ່ທ່ານ ແລະ ລູກນ້ອຍ.

**ເມື່ອລູກນ້ອຍຂອງທ່ານເລີ່ມຮຽນເວົ້າ.**

**ຊ່ວຍໃຫ້ລູກຂອງທ່ານສື່ສານດ້ວຍຄຳສັບຕ່າງໆ.**

ເດັກນ້ອຍຍັງບໍ່ຮູ້ຄຳສັບພຽງພໍ ກ່ຽວກັບທຸກສິ່ງທຸກຢ່າງ ທີ່ລາວຢາກເວົ້າ. ດັ່ງນັ້ນ, ລາວຈະມັກໃຊ້ສຽງ ຫຼື ຄຳສັບ ຫຼື ຫຼາຍໆຄຳສັບ ເພື່ອໃຊ້ແທນຄຳເວົ້າຫຼາຍສິ່ງຫຼາຍຢ່າງ. ຫ້າມບອກລູກຂອງທ່ານວ່າ ລູກໄດ້ເວົ້າບາງຄຳສັບຜິດ ທ່ານຮູ້ບໍ່ວ່າ ຄຳສັບທີ່ລາວເວົ້າອອກມານັ້ນ ມັນຈະຄ່ອຍເພີ່ມຄວາມກ້າວໜ້າ ໂດຍການນຳມາເພີ່ມເຕີມຄຳສັບທີ່ລາວຍັງບໍ່ທັນໄດ້ເວົ້າອອກມາ.







ຖ້າໃຫ້ລູກນ້ອຍຂອງທ່ານຖາມບາງສິ່ງບາງຢ່າງ ເຊິ່ງເປັນການໃຫ້ລາວເປັນຜູ້ເລີ່ມຕົ້ນຖາມຂຶ້ນກ່ອນ.









ໃຊ້ຄຳຖາມທີ່ກ່ຽວກັບຄວາມຕ້ອງການຂອງເດັກ ແລ້ວໃຫ້ລາວຕອບຄຳຕອບພຽງສັ້ນໆ ເຊັ່ນ: “ບໍ່” ຫຼື “ໂດຍ”.




ເຮັດໃຫ້ລູກນ້ອຍຂອງທ່ານເປັນຜູ້ນຳ ເມື່ອເວລາທ່ານກຳລັງເວົ້າຢູ່. ເວົ້າກ່ຽວກັບສິ່ງທີ່ລາວຢາກເວົ້າ.

ເມື່ອຂໍ້ຄວາມທີ່ອອກມາຈາກປາກລູກນ້ອຍຂອງທ່ານມັນບໍ່ຈະແຈ້ງ, ກໍ່ໃຫ້ທ່ານແນະນຳລາວ ບາງຄັ້ງ ຍາກທີ່ຈະເຂົ້າໃຈຄຳເວົ້າທີ່ເດັກພະຍາຍາມເວົ້າອອກມາ, ເຊິ່ງເຮັດໃຫ້ທ່ານບໍ່ເຂົ້າໃຈໃນສິ່ງທີ່ເດັກກຳລັງເວົ້າຢູ່.

ທ່ານອາດຈະພະຍາຍາມຖາມລາວອີກ:

ຖ້າທ່ານຍັງບໍ່ເຂົ້າໃຈສິ່ງທີ່ລູກພະຍາຍາມເວົ້າອອກມານັ້ນ ໃຫ້ທ່ານຫາວິທີເຮັດໃຫ້ລາວຮູ້ຈັກກັບສິ່ງນັ້ນດີຂຶ້ນ.






## ບັນຫາງ່າຍໆທີ່ມັກເກີດຂຶ້ນໃນລະຫວ່າງການຮຽນເວົ້າ.

ເດັກນ້ອຍທີ່ສາຍຕາດີຈະສາມາດສ້າງແນວຄວາມຄິດກ່ຽວກັບການສື່ສານຈາກການສັງເກດຄົນທົ່ວໄປເວົ້າ ແຕ່ເດັກນ້ອຍທີ່ເບິ່ງບໍ່ເຫັນດີແມ່ນຈະຂາດສິ່ງນັ້ນໄປ ແລະ ອາດຈະຮຽນເວົ້າກັບເດັກນ້ອຍທີ່ເບິ່ງເຫັນໄດ້ດີ. ດັ່ງນັ້ນ, ເມື່ອກຳລັງຮຽນເວົ້າເດັກທີ່ເບິ່ງບໍ່ເຫັນດີມັກຈະ:

- ເວົ້າຕາມຫຼັງຜູ້ອື່ນ ເຊິ່ງຈະມີສ່ວນໜ້ອຍທີ່ເວົ້າອອກມາຈາກຄວາມຄິດຂອງຕົນເອງ.
- ໃຊ້ຄຳສັບ “ລາວ”, “ຂ້ອຍ”, “ມັນ” ແລະ “ເຈົ້າ” (ອອກສຽງສຳນຽງ) ຢ່າງຖືກຕ້ອງ.
- ບໍ່ມັກຫຼຽວໄປຫາບຸກຄົນທີ່ກຳລັງເວົ້ານຳຢູ່.
- ມັກຖາມຫຼາຍໆຄຳຖາມ.

ຖ້າລູກນ້ອຍຂອງທ່ານກຳລັງມີບັນຫາດັ່ງທີ່ກ່າວມານີ້, ບາງກິດຈະກຳເຫຼົ່ານີ້ອາດຈະສາມາດຊ່ວຍໄດ້.

## ຊ່ວຍໃຫ້ລູກນ້ອຍຂອງທ່ານເວົ້າໂດຍການໃຊ້ຄວາມຄິດເປັນຂອງຕົນເອງ.

ມັນເປັນເລື່ອງທຳມະຊາດທີ່ເດັກນ້ອຍໆ ມັກເວົ້າຕາມຫຼັງຄຳເວົ້າຂອງຜູ້ອື່ນ. ແຕ່ຄວາມຈິງແລ້ວ ເດັກນ້ອຍຄວນຈະຖືກກະຕຸ້ນໃຫ້ເວົ້າຄຳສັບຕ່າງໆຕາມຫຼັງ ເພາະວ່າ ມັນຊ່ວຍໃຫ້ລາວຮຽນເວົ້າ ແຕ່ວ່າ ເດັກທີ່ເບິ່ງບໍ່ເຫັນດີແມ່ນຈະໃຊ້ເວລາດົນສົມຄວນໃນການເວົ້າຕາມຫຼັງຄຳສັບຕ່າງໆ, ເຊິ່ງມັນອາດຈະເປັນການຮຽນເວົ້າທີ່ນຳໄປເຖິງສິ່ງທີ່ລາວກຳລັງຄິດຢູ່. ເຫດການແບບນີ້ກໍ່ຍ້ອນວ່າ:

- ເດັກນ້ອຍອາດຈະຕ້ອງການຮວບຮວມເອົາຄຳເວົ້າທີ່ຈະນຳມາເວົ້າກັບທ່ານ ແຕ່ລາວບໍ່ມີຄວາມຮັບຮູ້ພຽງພໍກ່ຽວກັບຄຳສັບຕ່າງໆ ທີ່ຈະບອກທ່ານກ່ຽວກັບສິ່ງນັ້ນ.
- ລາວອາດບໍ່ເຂົ້າໃຈຄຳເວົ້າຂອງທ່ານ, ຕັ້ງແຕ່ຕອນທີ່ລາວບໍ່ສາມາດເບິ່ງເຫັນສິ່ງທີ່ທ່ານກຳລັງເວົ້າເຖິງຢູ່.
- ລາວອາດຈະເວົ້າລືມຄືນຄຳສັບຕ່າງໆທີ່ລາວພະຍາຍາມທຳຄວາມເຂົ້າໃຈວ່າມີຄວາມໝາຍຄືແນວໃດ.

ຖ້າລູກນ້ອຍຂອງທ່ານເວົ້າຕາມສິ່ງທີ່ທ່ານກຳລັງເວົ້າ, ຈົ່ງເຮັດໃຫ້ລາວຮູ້ວ່າທ່ານໄດ້ຍິນລາວ ແລະ ອະທິບາຍສິ່ງທີ່ລາວກຳລັງເວົ້າອອກມາ. ນີ້ເປັນການສະແດງໃຫ້ລູກເຫັນວ່າທ່ານກຳລັງຟັງລາວຢູ່ ແລະ ມັນຍັງເປັນການສະແດງໃຫ້ລາວສະແດງອາການຕອບຄຳສັບອື່ນໆນຳອີກ.






ພະຍາຍາມທຳຄວາມເຂົ້າໃຈສິ່ງທີ່ລູກນ້ອຍ ຂອງທ່ານພະຍາຍາມທີ່ຈະເວົ້າມັນ ເມື່ອຕອນທີ່ລາວເວົ້າລື້ມຄືນຄຳເວົ້າຂອງທ່ານ. ຊ່ວຍໃຫ້ລາວເບິ່ງເຫັນຄວາມຮູ້ສຶກນັ້ນ ແລະ ແນວຄວາມຄິດທີ່ອາດຈະຕ້ອງການເວົ້າເຖິງ ແຕ່ບໍ່ຮູ້ຊິເວົ້າ.

ໃຫ້ໂອກາດແກ່ລູກນ້ອຍຂອງທ່ານເລື້ອຍໆ ໃນການເຂົ້າຮ່ວມການຮຽນຮູ້ສິ່ງຕ່າງໆ ກ່ຽວກັບໂລກ ແລະ ໄດ້ຈັບບາຍສິ່ງທີ່ທ່ານກຳລັງເວົ້າເຖິງ. ສິ່ງນີ້ອາດຈະຊ່ວຍໃຫ້ລາວຮຽນຮູ້ຫຼາຍໆຄຳສັບເພີ່ມຂຶ້ນ ດັ່ງນັ້ນ ລາວຈະເວົ້າຕາມຫຼັງຂອງທ່ານໜ້ອຍລົງເລື້ອຍໆ ແລະ ມັນຍັງສະແດງໃຫ້ຄົນອື່ນເຫັນວ່າ ທ່ານຊ່ວຍເຫຼືອລູກໄດ້ແນວໃດ.







ເໝືອນກັບວ່າລູກນ້ອຍຂອງທ່ານມີອາຍຸເພີ່ມຂຶ້ນ, ຊວນໃຫ້ລາວຮູ້ຈັກເວົ້າຕາມສິ່ງທີ່ຄົນອື່ນເວົ້າແຕ່ບໍ່ໄດ້ເວົ້າຂໍ້ຄວາມທີ່ຖືກຕ້ອງເລີຍ.

## ຊ່ວຍໃຫ້ລູກນ້ອຍຂອງທ່ານຮຽນຮູ້ນຳໃຊ້ຄຳແທນນາມ.

ຄຳແທນນາມແມ່ນຄຳສັບ “ລາວ”, “ເຈົ້າ” ຫຼື “ມັນ”. ເຊິ່ງຄຳສັບເຫຼົ່ານີ້ຈະສາມາດກ່າວໄປເຖິງຜູ້ຄົນ ແລະ ສິ່ງຂອງຫຼາຍໆຢ່າງທີ່ແຕກຕ່າງກັນ. ເດັກນ້ອຍທຸກຄົນຈະມີການຮຽນຮູ້ໃນການອອກສຽງໄດ້ຢ່າງຖືກຕ້ອງນັ້ນແມ່ນຍາກຫຼາຍ. ແຕ່ເດັກນ້ອຍທີ່ເບິ່ງບໍ່ເຫັນດີ ຍິ່ງຈະຍາກຂຶ້ນຕື່ມ ນັ້ນກໍ່ຍ້ອນວ່າ ລາວບໍ່ເຫັນບຸກຄົນ ຫຼື ສິ່ງຂອງທີ່ກຳລັງເວົ້າເຖິງນັ້ນ ຫຼື ຖ້າຜູ້ເວົ້າເປັນທັງຜູ້ຍິງ ແລະ ຜູ້ຊາຍ. ມັນອາດຈະໃຊ້ເວລາເປັນປີ ຫຼື ສອງປີ ທີ່ຈະສາມາດສອນໃຫ້ເດັກນ້ອຍຜູ້ທີ່ເບິ່ງບໍ່ເຫັນດີນັ້ນ ໃຫ້ໃຊ້ຄຳແທນນາມໄດ້ຢ່າງຖືກຕ້ອງ.

ໝັ່ນໃຊ້ຄຳແທນນາມສະເໝີ ໃນຂະນະທີ່ທ່ານກຳລັງເວົ້າກັບເຂົາ ຈົນກວ່າເຂົາສາມາດເວົ້າ ໄດ້ເອງຢ່າງຖືກຕ້ອງ. ແຕ່ຕ້ອງໃຫ້ແນ່ໃຈວ່າ ເດັກຮູ້ວ່າທ່ານກຳລັງເວົ້າກັບລາວຢູ່ ທ່ານອາດຈະເວົ້າ ຊື່ຂອງລາວຂຶ້ນກ່ອນ ຫຼື ຈັບລາວຄ່ອຍໆ ຢ່າງອ່ອນນ້ອມ ເພື່ອເຮັດໃຫ້ລາວມີຄວາມເອົາໃຈໃສ່ກັບບຸກຄົນທີ່ກຳລັງເວົ້າກັບລາວຢູ່.




ຫຼິ້ນເກມໃນຮູບແບບຈັບພາກສ່ວນຕ່າງໆ ຂອງຮ່າງກາຍ ເມື່ອລູກນ້ອຍຂອງທ່ານຮູ້ຈັກພາກສ່ວນຕ່າງໆຂອງຮ່າງກາຍແລ້ວ, ຊ່ວຍໃຫ້ລາວຊີ້ຕາມພາກສ່ວນຕ່າງໆຂອງຮ່າງກາຍຄືກັນກັບຄົນອື່ນໆ.









ຖ້າລູກຂອງທ່ານຮູ້ສຶກສັບສົນ, ໃຫ້ສະແດງໃຫ້ລາວ ເຫັນວ່າ ທ່ານກຳລັງເວົ້າເຖິງໃຜ ໂດຍການຊີ້ໃຫ້ລາວ ເຫັນບຸກຄົນທີ່ກຳລັງເວົ້າເຖິງນັ້ນ ດ້ວຍການໃຊ້ຄຳ ແທນນາມກ່າວເຖິງບຸກຄົນດັ່ງກ່າວ.




ຫຼິ້ນເກມກັບລາວດ້ວຍການກະ ຕຸ້ນໃຫ້ເດັກຕອບໂຕ້ກັບຄືນ ທ່ານ, ເນັ້ນໜັກໃຫ້ເດັກໃຊ້ຄຳ ແທນນາມຄືກັນ ກັບທ່ານ.

ຖ້າລູກນ້ອຍຂອງທ່ານກຳລັງເວົ້າຄຳແທນນາມໄດ້ຢ່າງຖືກຕ້ອງ ຍ້ອນການເວົ້າຕາມຫຼັງຜູ້ອື່ນ, ໃຫ້ທ່ານພະຍາຍາມອະທິບາຍ ຫຼື ແນະນຳຄຳສັບດັ່ງກ່າວໂດຍດ່ວນ.

## ຊ່ວຍໃຫ້ລູກນ້ອຍຂອງທ່ານຫັນໜ້າໄປຫາບຸກຄົນທີ່ກຳລັງເວົ້າຢູ່.

ເພາະວ່າ ພວກເຂົາເບິ່ງບໍ່ເຫັນຄົນທີ່ກຳລັງເວົ້າຢູ່, ເດັກນ້ອຍຕາບອດຈະບໍ່ຮູ້ວ່າ ຄວນຈະຫັນໜ້າ ໄປຫາບຸກຄົນທີ່ພວກເຂົາກຳລັງເວົ້າເຖິງຢູ່ນັ້ນ. ພະຍາຍາມກະຕຸ້ນໃຫ້ລູກນ້ອຍຂອງທ່ານຫັນ ໜ້າໄປຫາຄົນທີ່ລາວກຳລັງເວົ້າເຖິງພວກເຂົາຢູ່.




ຂັ້ນຕອນທຳອິດ, ທ່ານຕ້ອງຈັບໃບໜ້າ ຂອງລູກໃຫ້ຫັນມາຫາທ່ານ ໃນເວລາທີ່ທ່ານ ກຳລັງເວົ້າ.




ເມື່ອລາວໃຫຍ່ຂຶ້ນ, ສອນ ໃຫ້ລາວຫັນໜ້າມາຫາ ທ່ານ ເມື່ອທ່ານກຳລັງ ເວົ້າຢູ່.

## ຊ່ວຍໃຫ້ລູກນ້ອຍຂອງທ່ານຮູ້ຖາມ 2 ຫຼື 3 ຄຳຖາມ.

ເດັກນ້ອຍສ່ວນຫຼາຍຈະເຂົ້າໃຈໄດ້ຢ່າງແຈ່ມແຈ້ງ ເມື່ອເວລາພວກເຂົາມັກຖາມຫຼາຍໆຄຳຖາມ. ແຕ່ວ່າ ເດັກນ້ອຍຕາບອດມັກຈະໃຊ້ເວລາຖາມດົນ ເພື່ອຖາມຫຼາຍໆຄຳຖາມ. ນັ້ນອາດຈະເປັນເພາະວ່າ:

- ພວກເຂົາເບິ່ງບໍ່ເຫັນສິ່ງຕ່າງໆທີ່ເກີດຂຶ້ນຢູ່ອ້ອມຂ້າງ.
- ພວກເຂົາຍັງຮູ້ຈັກຄຳສັບບໍ່ພຽງພໍທີ່ຈະນຳມາເປັນບົດສົນທະນາໄດ້.
- ພວກເຂົາຢາກສື່ສານກັບບຸກຄົນອື່ນໆ.
- ພວກເຂົາມັກຈະຖາມຄຳຖາມຕ່າງໆນຳຜູ້ໃຫຍ່.

ຖ້າລູກນ້ອຍຂອງທ່ານກຳລັງຖາມທ່ານກ່ຽວກັບຫຼາຍໆຄຳຖາມຍາກທີ່ທ່ານຈະເຂົ້າໃຈ ຫຼື ຍາກທີ່ຕອບມັນໄດ້ທັງໝົດ ຫຼື ຄຳຖາມເຫຼົ່ານັ້ນເບິ່ງໄປແລ້ວ ຈະເຮັດໃຫ້ລາວກຳລັງຮຽນຮູ້ການເວົ້າອື່ນໆ, ລາວຕ້ອງການຄວາມຊ່ວຍເຫຼືອຈາກທ່ານ.

ຄົ້ນຫາຄວາມຮູ້ສຶກທີ່ອາດຈະເຊື່ອງຊ້ອນຢູ່ນຳຄຳຖາມຕ່າງໆຂອງເດັກ.




ອະທິບາຍປະສົບການໃໝ່ໆ ກ່ອນທີ່ລາວຈະໄປປະເຊີນໜ້າກັບມັນ ວິທີນີ້ຈະເຮັດໃຫ້ລາວບໍ່ຈຳເປັນຕ້ອງຖາມຫຼາຍໆ ຄຳຖາມ ທີ່ຈະດຳເນີນຕໍ່ໄປ.




ຟັງເບິ່ງວ່າທ່ານຈະເວົ້າກັບລູກນ້ອຍຂອງທ່ານແນວໃດ. ທ່ານກຳລັງຖາມລາວຫຼາຍໆ ຄຳຖາມບໍ່? ຖ້າເປັນແນວນັ້ນ, ພະຍາຍາມສັງເກດຮູບແບບຄຳຖາມຂອງທ່ານ. ຕົວຢ່າງ: ແທນທີ່ທ່ານຈະຖາມລາວວ່າ "ລູກຢາກເຂົ້ານອນແລ້ວບໍ?" ເວົ້າ:

